ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
ສູນຄົ້ນຄວ້າປ່າໄມ້
ໂຄງການກະສິກຳເພື່ອໂພຊະນາການ ໄລຍະ II

ເຕັກນິກການຂະຫຍາຍພັນ ແລະ ການປູກໄມ້ຂົມ

ກຸມພາ, 2025

.indd 1 4/30/2025 9:07:27 AM

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ສູນຄົ້ນຄວ້າປ່າໄມ້

ໂຄງການກະສິກຳເພື່ອໂພຊະນາການ ໄລຍະ II

ເຕັກນິກການຂະຫຍາຍພັນ ແລະ ການປູກໄມ້ຂີ້ມ

ຂຽນ ແລະ ຮຽບຮຽງ:

ບັນຊາ ທຳມະວົງ

ອອກແບບ ແລະ ຈັດໜ້າ:

ອານິງ ວິໄລວັນ

ກວດແກ້:

ສຸລິວົງ ໄຊຍະວົງ

ວົງວິໄລ ວົງຄຳຊາວ

ກຸມພາ, 2025

.indd 2 4/30/2025 9:07:27 AM

ຂໍ້ແນະນຳ

ປຶ້ມຄູ່ມືສະບັບນີ້ແມ່ນການແນະນຳທາງດ້ານເຕັກນິກການກ້າ ແລະ ການປູກ ທີ່ໄດ້ພັດທະນາ ແລະ ປັບປຸງມາຈາກປຶ້ມເຕັກນິກທີ່ທາງໂຄງການກະສິກຳເພື່ອໂພສະນາການໄລຍະ 1 ໄດ້ຈັດຕັ້ງປະຕິບັດຜ່ານມາ. ປຶ້ມຄູ່ມືນີ້ສາມາດເຮັດໃຫ້ຜູ້ອ່ານເຂົ້າໃຈໄດ້ງ່າຍ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ເກີດປະໂຫຍດ. ຜູ້ຂຽນໄດ້ ຄັດຈ້ອນເອົາເຕັກນິກທີ່ແທດເໝາະ ແລະ ງ່າຍດາຍສຳລັບການຂະຫຍາຍພັນ ແລະ ການປູກໝໍ່ໄມ້ຂົ່ມ ເພື່ອສາມາດນຳເອົາເຕັກນິກດັ່ງກ່າວນີ້ໄປສົ່ງເສີມໃຫ້ບັນດາຊາວກະສິກອນ ແລະ ບັນພາກສ່ວນກ່ຽວຂ້ອງ ນຳໄປໝູນໃຊ້ໄດ້. ຈຸດປະສົງຂອງປຶ້ມຄູ່ມືເຕັກນິກເຫຼັ້ມນີ້ແມ່ນເພື່ອຜັນຂະຫຍາຍເຕັກນິກອັນໃໝ່ກ່ຽວກັບການກ້າ ແລະ ການປູກລົງສູ່ທ້ອງຖິ່ນ. ສ້າງຄວາມເຂັ້ມແຂງທາງດ້ານເຕັກນິກວິຊາການ ແລະ ໃຫ້ປະຊາຊົນໃນເຂດບ້ານເປົ້າໝາຍໂຄງການ ໃຫ້ມີຄວາມຮູ້ຄວາມສາມາດທາງດ້ານການກ້າ ແລະ ການປູກ. ເພື່ອເປັນການສົ່ງເສີມທາງດ້ານກະສິກຳ ເພື່ອໂພສະນາການ ທີ່ມີແຫຼ່ງອາຫານຈາກປ່າຢ່າງພຽງພໍ, ປະຊາຊົນມີຢູ່ມີກິນ ມີແຮໄວ້ ແລະ ຂາຍ ສ້າງລາຍຮັບແກ່ຄອບຄົວ. ປະຊາຊົນເຫັນໄດ້ຄວາມສຳຄັນຂອງພືດທີ່ເປັນອາຫານ ແລະ ທັງເປັນເສດຖະກິດແກ່ຄອບຄົວ ເຮັດໃຫ້ຄອບຄົວມີຄວາມອຸດົມສົມບູນຂຶ້ນ.

ສຳລັບຜູ້ຊົມໃຊ້ປຶ້ມຄູ່ມືເຫຼັ້ມນີ້ແມ່ນທຸກພາກສ່ວນທີ່ກ່ຽວຂ້ອງສາມາດນຳໄປໃຊ້ໄດ້ນັບຕັ້ງແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນເຊັ່ນ: ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນຜູ້ຂຽນຄູ່ມືແນະນຳ ແລະ ນຳໄປເຜີຍແຜ່ທາງດ້ານເຕັກນິກໃຫ້ແກ່ພະນັກງານຂະແໜງປ່າໄມ້ແຂວງ, ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຜູ້ປະສານງານໂຄງການຂັ້ນເມືອງ ສາມາດນຳໄປຖ່າຍທອດໃຫ້ແກ່ປະຊາຊົນບ້ານເປົ້າໝາຍໂຄງການ.

.indd 3 4/30/2025 9:07:27 AM

ສາລະບານ

	ໜ້າ
ຂໍ້ແນະນຳ	3
ສາລະບານ	4
ຄຳນຳ	5
1 ໄມ້ຂົ່ມ	7
1.1 ລັກສະນະພືດສາດ	7
1.2 ການກະຈາຍພັນ ແລະ ລະບົບນິເວດ	7
2 ຄຸນປະໂຫຍດ	7
2.1 ການນຳໃຊ້	7
2.2 ດ້ານໂພສະນາການ	8
3 ເຕັກນິກການຂະຫຍາຍພັນໄມ້ຂົ່ມ	8
3.1 ການປັກຊຳເຫງົ້າ	8
4 ເຕັກນິກການປູກໄມ້ຂົ່ມ ແລະ ການບົວລະບັດຮັກສາ	8
4.1 ການບຸກເບີກພື້ນທີ່	9
4.2 ການປັກຫຼັກໝາຍຂຸມປູກ	9
4.3 ເຕັກນິກການປູກໄມ້ຂົ່ມ	9
4.4 ການບົວລະບັດຮັກສາ	10
5 ການເກັບກູ້ໝໍ່ໄມ້ຂົ່ມ	11
ສາລະບານຕາຕະລາງ	
ຕາຕະລາງ 01: ກິດຈະກຳ ແລະ ໄລຍະເວລາບົວລະບັດຮັກສາສວນປູກໄມ້ຂົ່ມ	10
ເອກະສານອ້າງອີງ	12

.indd 4 4/30/2025 9:07:27 AM

ຄຳນຳ

ໄມ້ປ່ອງມີບົດບາດສຳຄັນຫຼາຍຕໍ່ການດຳລົງຊີວິດຂອງປະຊາຊົນ ໂດຍສະເພາະໃນປະເພດຊະນິດນີ້ນຳມາໃຊ້ປະຈຳວັນ ແລະ ມີຈຳນວນຫຼາຍກວ່າໝູ່ໃນກຸ່ມທີ່ຖືກເອີ້ນວ່າເຄື່ອງປ່າຂອງດົງ. ໄມ້ປ່ອງ ຖືກນຳໃຊ້ໃນຫລາຍວິທີທາງ; ເຊັ່ນ: ການປູກໄວ້ໃນສວນ ແລະ ປູກເປັນໄມ້ປະດັບ, ນຳໃຊ້ໜໍ່ໃໝ່ ແລະ ປ້ອງອ່ອນທີ່ເປັນອາຫານ, ກາບແຫ້ງນຳມາໃຊ້ປະໂຫຍດໃນການຫຸ້ມຫໍ່ (ອາຫານ), ໃບນຳມາຜະລິດເປັນສວ່ນປະສົມໃສ່ນ້ຳອຸ່ນດື່ມ (ເປັນຊາໃບໄມ້ປ່ອງ), ສານສະກັດຈາກໄມ້ປ່ອງເປັນຂອງແຫຼວ ແລະ ເປັນຜະລິດຕະພັນປະຈຳວັນ (ເຄື່ອງສຳອາງ), ເຄື່ອງຫັດຖະກຳ ເປັນວັດສະດຸຕ່າງໆ ສຳ ລັບປຸກສ້າງເຮືອນ/ອາຄານ, ເຟີນິເຈີ, ວຽກງານພາຍໃນ, ໄມ້ຖູ, ໄມ້ປີ້ງ, ຫວດ, ຫັດຖະກຳ, ພາຊະນະບັນຈຸ, ບັ້ງໃສ່ນ້ຳ, ໄມ້ຄ້ອນ, ດ້ານເຄື່ອງມືໃຊ້ສອຍ ແລະ ເຄື່ອງດົນຕີພື້ນເມືອງ (Yuming et al. 2004).

ໄມ້ປ່ອງມີລັກສະນະພິເສດສະເພາະ ການຈະເລີນເຕີບໂຕໄດ້ໄວ ຈາກການພັດທະນະ ລະບົບຂອງເຫງົ້າ (rhizome) ແລະ ມີຮາກຈຳນວນຫຼາຍ , ໂດຍອີງໃສ່ລັກສະນະໂຄງປະກອບສ້າງ ຂອງເສັ້ນໄຍ (fiber) ແລະ ຮູບຮ່າງພາຍນອກ ມີຄວາມເໝາະສົມໃນການນຳມາໃຊ້ປະໂຫຍດ ທາງສັງຄົມ ແລະ ເສດຖະກິດເປັນ ຢ່າງສູງ. ນອກຈາກການຂະຫຍາຍພັນດ້ວຍເຫງົ້າ ແລ້ວ ໄມ້ປ່ອງຍັງມີໂອກາດ ອອກດອກ ແລະ ໝາກອີກ (ເອີ້ນວ່າເປັນຂີ) ເມື່ອເຖິງຍາມເປັນຂີ ບາງຊະນິດ ອາດໃຊ້ເວລາແຕກຕ່າງກັນ 5 ເຖິງ 10 ປີ ຫຼື ອາດ 70 ຮອດ 100 ກວ່າ ປີ ແລະ ກໍ່ຈະຕາຍໝົດສຸມ ຫຼື ທັງໝົດໃນບໍລິເວນນັ້ນໆ ໝາກມັນກໍ່ຈະແຜ່ກະຈາຍ ແລະ ເກີດເບ້ຍໃໝ່ ເຊິ່ງສາມາດ ນຳໄປກ້າ ຫຼື ປູກໄດ້ ໄມ້ປ່ອງເປັນໄມ້ທີ່ປູກງ່າຍ ໃຫຍ່ໄວຈະເລີນເຕີບໂຕໄດ້ດີ ບໍ່ເລືອກດິນ ແລະ ເປັນພືດທີ່ ເໝາະສົມສຳວຽກງານ ປູກຟື້ນຟູປ່າ, ອານຸລັກດິນ ແລະ ປ່າໄມ້ຊຸມຊົນ.

ໄມ້ປ່ອງ ຖືກຈັດເຂົ້າໃນພືດຕະກູນຫຍ້າ (POACEAE) ໃນຕະກູນຍ່ອຍ ເຊິ່ງໃນທົ່ວໂລກ ມີຫຼາຍກວ່າ 123 ສະກຸນ ແລະ 1678 ຊະນິດ (https://www.bambooinfo.in/species/bamboos-of-world.asp), ຢູ່ອາຊີຕາເວັນອອກສຽງໄຕ້ 45 ສະກຸນ ແລະ ມີ 750 ຊະນິດ (Dransfield 1980, 1998 et al. 2004); ຄາດວ່າຍັງມີອີກຫຼາຍຊະນິດທີ່ຍັງບໍ່ທັນໄດ້ຕີພິມ ແລະ ບໍ່ທັນຖືກຄົ້ນພົບ ໂດຍສະເພາະຢູ່ໃນຂົງເຂດ ອາຊີ ແລະ ແຫຼມອິດູຈີນ. ການຈັດຈຳນວນກໄມ້ປ່ອງໃນ ສປປ ລາວ ແຕ່ລະໄລຍະແມ່ນໄດ້ພົບເຫັນໄມ້ປ່ອງ 15 ສະກຸນ ແລະ 55 ຊະນິດ (ສູນທອນ ເກດພັນ. 1994). ໃນປີ 2020 ໄດ້ສຳຫຼວດໄມ້ປ່ອງ ໃນ 8 ແຂວງພາກເຫນືອຂອງລາວ ພ້ອມກັບໄດ້ສັງລວມຈຳນວນຊະນິດໄມ້ປ່ອງໃນ ສປປ ລາວ ມາຮອດປະຈຸບັນ ແມ່ນມີຫລາຍກວ່າ 16 ສະກຸນ ແລະ 121 ຊະນິດ (ສີງກອນ ໄຊຍະລາດ. 2020).

ຊະນິດໄມ້ປ່ອງທີ່ສາມາດສ້າງລາຍຮັບ ແລະ ເປັນອາຫານທາງດ້ານໂພຊະນາການແມ່ນມີຫຼາຍຊະນິດ. ໜຶ່ງໃນນັ້ນ ແມ່ນໜໍ່ໄມ້ຂົມທີ່ມີທ່າແຮງສຳລັບການສົ່ງເສີມການປູກ. ໂດຍສະເພາະແມ່ນເຂດພາກເໜືອຂອງລາວ ການຕັດລຳໄມ້ຂົມ ມານຳໃຊ້ ແລະ ຂາຍສ້າງລາຍຮັບແມ່ນສາມາດຕັດໄດ້ຕະຫຼອດປີ ແລະ ລຳທີ່ມີ

.indd 5 4/30/2025 9:07:27 AM

ຄຸນນະພາບຕ້ອງແມ່ນລຳອາຍຸແກ່ກວ່າ 3 ປີ ຂຶ້ນໄປ. ໜໍ່ຈະເກີດອອກຕາມຂໍ້ຂອງ ລຳໄຕ້ດິນ ຢູ່ເລິກປະມານ 20-60 ຊັງຕີແມັດ. ໃນໜຶ່ງເຮັກຕ່າສາມາດເກັບໜໍ່ສົດ ໄດ້ເຖິງ 4,500-5,000 ໜໍ່ ເທົ່າກັບ 800-1,000 ກິໂລ. ຢູ່ບ້ານນ້ຳແພງ, ເມືອງນາ ໝໍ້, ແຂວງອຸດົມໄຊ, ຜູ້ໜຶ່ງສາມາດເກັບໜໍ່ຂົມໄດ້ 10-20 ກິໂລຕໍ່ວັນ. ລຳສາມາດ ເກັບກູ້ໄດ້ເຖິງ 4,480 ລຳຕໍ່ເຮັກຕ່າ ຫຼື ປະມານ 2,5 ໂຕ່ນຕໍ່ເຮັກຕ່າ (Viloune Soydara and Sounthone Ketphanh, 2000).

.indd 6 4/30/2025 9:07:27 AM

1. ໄມ້ຂົມ (ໄຜ່ຂົມ)

ຊື່ທ້ອງຖິ່ນ: ໝໍ່ຂົມ, ໝໍ່ໄມ້ຂົມ, ຈາກຈັງ (ຂະມຸ), ຮາຄາ (ລາວສູງ).
ຊື່ວິທະຍາສາດ: Indosasa sinica C.D.Chou & C.S. Chao.
ວົງຕະກຸນ: POACEAE
ໃນຕະກູນຍ່ອຍ: Bambusoidea
ຊື່ອື່ນ: ໄທ: ໄຜ່ຂົມ
ອັງກິດ: Bitter bamboo.

1.1 ລັກສະນະພົດສາດ:

ໝໍ່ໄມ້ຂົມເປັນໝໍ່ໄມ້ທີ່ນິຍົມກັນຫຼາຍຢູ່ພາຍໃນ ແລະ ທັງໄດ້ສົ່ງອອກເປັນຈຳນວນຫຼາຍໄປຈີນ ແລະ ໄທ. ສ່ວນລຳໃຊ້ເຮັດເຄື່ອງຫັດຖະກຳຈັກສານ ແລະ ໃນການກໍ່ສ້າງ. ໄມ້ຂົມເກີດດ່ຽວ ແລະ ມີລະບົບລຳຕົ້ນອ່ອນຢູ່ໃຕ້ດິນເປັນສີແດງປົນດຳ. ລຳສູງເຖິງ 7-10 ແມັດ. ເມື່ອລຳມີອາຍຸແກ່ຈະມີປ່ຳມສີຂາວຈັບຢູ່ທົ່ວລຳ. ສ່ວນທີ່ສາມາດຕັດນຳໄປໃຊ້ໄດ້ຍາວ 5-6 ແມັດ; ມີເສັນຜ່າສູນກາງລຳ 2-4 ຊັງຕິແມັດ; ປ້ອງຍາວ 20-55 ຊັງຕິແມັດ ແລະ ໜາ 7-8 ມິນລິແມັດ. ແຕ່ລະຂໍ້ມີວົງແຫວນ 2 ວົງ ຟູຈະແจ້ງ ແລະ ມີ 1-3 ແໜງ. ສ່ວນຫຼາຍຈະມີຢູ່ກາງຂອງລຳຂຶ້ນໄປຫາທາງປາຍ. ກາບຫຸ້ມລຳສີຂຽວອ່ອນ, ກວ້າງ 13-15 ຊັງຕິແມັດ ແລະ ຍາວ 30 ຊັງຕິແມັດ. ຂ້າງໃນກາບຫຸ້ມລຳກ້ຽງ, ຂ້າງນອກກາບມີຂົນສັ້ນໆ, ຫູກາບເປັນຂໍຍາວ 3-5 ຊັງຕິແມັດ. ໃບຍ່ອຍຍາວ 15-25 ຊັງຕິແມັດ, ກວ້າງ 1,5-3,5 ຊັງຕິແມັດ ແລະ ບໍ່ມີຂົນ. ການອອກໜໍ່ຈະເລີ່ມອອກແຕ່ເດືອນທັນວາ-ເດືອນ ພຶດສະພາ.

1.2 ການກະຈາຍພັນ ແລະ ລະບົບນິເວດ:

ໄມ້ຂົມພົບເຫັນຢູ່ເຂດພູດອຍ ແລະ ໃນປ່າປະສົມຜັດໃບເຂດພາກກາງ ແລະ ພາກເໜືອຂອງລາວ. ໂດຍສະເພາະແມ່ນພາກ ເໜືອ ຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ຊຳເໜືອ, ຊຽງຂວາງ. ໝໍ່ຂົມເກີດຢູ່ເຂດດິນຄ້ອຍຊັນຕາມເນີນພູລະດັບສູງຈາກໜ້ານ້ຳທະເລ 300-800 ແມັດ.

2. ຄຸນປະໂຫຍດ

2.1 ການນຳໃຊ້:

ການປູກໄມ້ຂົມແມ່ນສາມາດຕອບແທນໃຫ້ແກ່ຄອບຄົວຊາວກະສິກອນຜູ້ປູກຄື: ໃຫ້ຜົນຜະລິດໝໍ່ໄມ້ ຄ່າໃຊ້ຈ່າຍໃນການລົງທຶນແມ່ນບໍ່ສູງ. ຈະມີລາຍຮັບຈາກການຂາຍໝໍ່ໄມ້ແຕ່ປີທີ 3 ເປັນຕົ້ນໄປ ໝໍ່ໄມ້ໃນລະດູການສາມາດຂາຍໄດ້ໃນລາຄາທີ່ຂ້ອນຂ້າງຕ່ຳເນື່ອງຈາກວ່າໝໍ່ໄມ້ຂົມຈະເກີດຂ້ອນຂ້າງຈຳນວນຫຼາຍກ່ວາຄວາມຕ້ອງການຂອງຕະຫຼາດ. ຖ້າມັນເປັນພື້ນທີ່ທີ່ມີນ້ຳພຽງພໍ, ໄມ້ຂົມອາດຈະສາມາດຜະລິດໝໍ່ໄມ້ນອກລະດູການໄດ້ ແລະ ໝໍ່ໄມ້ສາມາດຂາຍໄດ້ໃນລາຄາທີ່ສູງຂຶ້ນຫຼາຍ. ການປຸງແຕ່ງເປັນໝໍ່ໄມ້ດອງສາມາດແຮໄວ້ຂາຍໄລຍະຂາດແຄນໝໍ່ ແລະ ທັງເປັນສ້າງມູນຄ່າເພີ່ມໄດ້ອີກ. ໝໍ່ໄມ້ຂົມ

.indd 7 4/30/2025 9:07:27 AM

ໃຫ້ຄຸນປະໂຫຍດທາງດ້ານສະບຽງອາຫານທ້ອງຖິ່ນທີ່ແຊບຊ້ອຍ ແລະ ຂາຍ ສ້າງລາຍຮັບເພີ່ມແກ່ຄອບຄົວ.

ລຳຖືກນຳໃຊ້ເພື່ອຈຸດປະສົງດ້ານຫັດຖະກຳ ແລະ ກໍ່ສ້າງຫຼາຍຢ່າງ. ເຖິງ ວ່າການປູກໝໍ່ໄມ້ຂົມໃນ 3 ປີທຳອິດຈະບໍ່ມີລາຍໄດ້ຈາກການຂາຍໝໍ່ໄມ້. ແຕ່ ເຈົ້າຂອງສວນສາມາດຫາເງິນໄດ້ຈາກການຕັດລຳໄມ້ຂົມທີ່ມີອາຍຸແກ່ຂາຍໄດ້. ລາຄາຂາຍຂອງໄມ້ຂົມແມ່ນຂຶ້ນກັບຕະຫຼາດຕ້ອງການ ແລະ ຂະໜາດຂອງໄມ້ ຂົມ. ຖ້າວ່າເຈົ້າຂອງສວນມີການດູແລຮັກສາສວນໄມ້ຂົມທີ່ດີ ໄມ້ຂົມຈະຊ່ວຍ ເພີ່ມມູນຄ່າການຂາຍໃຫ້ແກ່ເຈົ້າຂອງສວນໄດ້.

2.2 ດ້ານໂພສະນາການ:

ໄມ້ປ່ອງ ປະກອບດ້ວຍເສັ້ນໃຍ ແລະ ທາດຄາໂບໄຮເດດສູງ ແລະ ກໍ່ມີທາດ ສັງກະສີ, ທອງ, ແລະ ມັງການີສ. ນອກນີ້ຍັງບັນຈຸມີ ທາດຟົດສຟໍ, ທາດເຫຼັກ ແລະ ເຊເລນຽມ ໃນປະລິມານນ້ອຍ. ໝໍ່ຍັງອຸດົມສົມບູນໄປດ້ວຍທາດໂປຼຕີນ ພືດ, ມີໄຂມັນຕ່ຳ ແລະ ທາດນ້ຳຕານທີ່ບໍ່ມີໂກເລສເຕໂຣນ ແຕ່ບັນຈຸທາດວິ ຕາມິນປະລິມານຕ່ຳ. ໄມ້ປ່ອງ ຍັງອ່ອນຈະບັນຈຸມີສານປະສົມ ໄຊອາໂນເຈນິ ກ ກະລີໂກຊາຍ ທີ່ສາມາດກາຍເປັນສານໄຊຍາໄນ ທີ່ເປັນພິດ ຖ້າຫາກວ່າຍັງ ດິບ ອາດກໍ່ໃຫ້ເກີດ ການເບື່ອ ຫຼື ມຶນເມົາໄດ້, ໃບບັນຈຸມີສານຟະເລໂວນອຍ.

3. ເຕັກນິກການຂະຫຍາຍພັນໄມ້ຂົມ

3.1 ການປັກຊຳເຫງົ້າ:

ເປັນວິທີທີ່ນຳໃຊ້ກັນທີ່ງ່າຍດາຍ ແລະ ໂອກາດລອດຕາຍສູງ ລຳຕົ້ນສາມາດ ປ່ຽງກິ່ງງ່າ ແລະ ປ່ຽງໃບໄວ.

ຂໍ້ຄວນພິຈາລະນາການຄັດເລືອກເຫງົ້າເພື່ອນຳໄປປັກຊຳມີດັ່ງນີ້:

- ລະດູການຂຸດເອົາເຫງົ້າແມ່ນຊ່ວງເດືອນ ທັນວາ ຊ່ວງນີ້ຝົນຢຸດໃໝ່ ແລະ ຂຸດເອົາເຫງົ້າງ່າຍ.
- ຫຼີກລ້ຽງເຫງົ້າທີ່ອາຍຸແກ່ຫຼາຍກວ່າ 3 ປີຂຶ້ນໄປ (ມີຄວາມສ່ຽງຕໍ່ການ ຈະເລີນເຕີບໂຕ ແລະ ຈະບໍ່ໃຫ້ໝໍ່ໃໝ່).
- ເລືອກເອົາລຳຕົ້ນ (ເຫງົ້າ) ທີ່ມີອາຍຸ 1-2 ປີ ຈະສັງເກດສີລຳຕົ້ນຂຽວອ່ອນ
- ລຳຕົ້ນ ຫຼື ເຫງົ້າບໍ່ມີຮອຍພະຍາດ ຫຼື ດ້ວງເຈາະ
- ຂຸດເອົາເຫງົ້າ ຂະໜາດລວງສູງ 30-50 ຊັງຕິແມັດ
- ນຳເອົາເຫງົ້າທີ່ຂຸດມາໃສ່ຖົງຢາງດຳ ແລ້ວເອົາດິນໃສ່ໃຫ້ເຕັມ ແລະ ຍັ່ນ ໃຫ້ແໜ້ນ
- ເອົາຖົງຊຳເຫງົ້າໄວ້ໃນເຮືອນຮົ່ມ ແລະ ຫົດນ້ຳວັນເວັ້ນວັນ (ບາມື້ຫົດນ້ຳ).
- ລ້ຽງເຫງົ້າຊຳຖົງໄວ້ຈົນກວ່າຈະຮອດລະການປູກ (ລະດູການປູກທີ່ເໝາະສົມ ແມ່ນເດືອນພຶດສະພາ)

4 ເຕັກນິກການປູກໄມ້ຂົມ ແລະ ການບົວລະບັດຮັກສາ

ກ່ອນຈະປູກໄມ້ຂົມຕ້ອງໄດ້ມີການກະກຽມພື້ນທີ່ ໃຫ້ມີສະພາບແວດລ້ອມທີ່

.indd 8 4/30/2025 9:07:27 AM

ເໝາະສົມ. ເພື່ອສະດວກໃຫ້ແກ່ການວາງແຜນປູກ, ສະດວກໃນການບົວລະບັດ ຮັກສາ ແລະ ການເກັບກູ້ໝໍ່ ແລະ ລຳໃນ ຕາມລະດູການ. ການກະກຽມພື້ນທີ່ ເພື່ອປູກໄມ້ຂົມແມ່ນມີຂັ້ນຕອນທີ່ຕ້ອງໄດ້ປະຕິບັດດັ່ງນີ້:

4.1 ການບຸກເບີກພື້ນທີ່

ການກຽມພື້ນທີ່ປູກບໍ່ຈຳເປັນຕ້ອງພິຖີພິຖັນຫຼາຍພຽງແຕ່ໃຊ້ພ້າ ຫຼື ຈັກ ຕັດຫຍ້າ ຫຼື ໃຊ້ລົດໄຖຂະໜາດນ້ອຍ (ລົດອີ່ແຕ່ນ) ໄຖພວນດິນກຳຈັດຫຍ້າ ອອກຈາກເນື້ອທີ່ປູກ, ປັບເນື້ອທີ່ໃຫ້ພຽງເພື່ອສະດວກໃນການປູກ ແລະ ການ ບົວລະບັດຮັກສາ. ຖ້າຫາກເນື້ອທີ່ບໍ່ສະໝ່ຳບໍ່ເໝີ ໃຫ້ເຮັດຮ່ອງລະບາຍນ້ຳໄວ້ ເພື່ອບໍ່ໃຫ້ນ້ຳຂັງ. ເມື່ອບຸກເບີກເນື້ອທີ່ກຽມປູກສຳເລັດແລ້ວ ຄວນລ້ອມຮົ້ວໃຫ້ ໜາແໜ້ນເພື່ອປ້ອງກັນສັດເຂົ້າໄປທຳລາຍສວນປູກ. ສິ່ງສຳຄັນອີກອັນໜຶ່ງ ແມ່ນສ້າງແລວປ້ອງກັນໄຟຄວາມກວ້າງບໍ່ໃຫ້ຫຼຸດ 4 ແມັດ ອ້ອມຮອບເນື້ອ ທີ່ສວນປູກໄມ້ຂົມ.

4.2 ການປັກຫຼັກໝາຍຂຸມປູກ

ພາຍຫຼັງບຸກເບີກ ແລະ ອະນາໄມເນື້ອທີ່ຮຽບຮ້ອຍແລ້ວ. ຕ້ອງໄດ້ ປັກຫຼັກໃຫ້ເປັນແຖວຊື່ ເພື່ອໝາຍຂຸມປູກ.

- ນຳໃຊ້ລຳໄມ້ປ່ອງ ຫຼື ໄມ້ປ່ອງທີ່ຜ່າເປັນດົ້ວ ຂະໜາດເສັ້ນຜ່າສູນກາງ 2 ຊັງຕີແມັດ ແລະ ຍາວ 1 ແມັດ, ຟ້ຽນສົ້ນເບື້ອງໃດໜຶ່ງໃຫ້ແຫຼມ.
- ຈົ່ງແລວທາງກັນໄຟກວ້າງ 4 ແມັດ ອ້ອມເນື້ອທີ່ປູກ.
- ເນັ່ງເຊືອກແລວແມ່ ໃຫ້ຂະໜານກັບເນື້ອທີ່ ຫຼື ຂະໜານກັບແລວກັນໄຟ ແລ້ວປັກຫຼັກໝາຍຂຸມປູກ ຊ່ອງລະ 2 ແມັດ ເພື່ອເປັນແລວແມ່.
- ພາຍຫຼັງປັກຫຼັກແລວແມ່ແລ້ວ ນຳໃຊ້ເຊືອກເສັ້ນດຽວກັນໃຫ້ເນັ່ງແລວ ປົກໃຫ້ຕັ້ງສາກກັບແລວແມ່ ພ້ອມປັກຫຼັກແລວປົກ ໝາຍຂຸມປູກຊ່ອງ ລະ 2 ແມັດ.
- ຫຼັງຈາກນັ້ນແມ່ນສາມາດດຳເນີນການປັກຫຼັກໝາຍຂຸມປູກໃຫ້ຢູ່ໃນແຖວ ແລະ ຖັນປູກ (ໄລຍະຫ່າງຂຸມປູກ) 2 X 2 ແມັດ ຈົນສຳເລັດ.

4.3 ເຕັກນິກການປູກໄມ້ຂົມ

ການປູກໄມ້ຂົມແມ່ນໃຫ້ດຳເນີນຊ່ອງຕົ້ນລະດູຝົນແມ່ນເໝາະສົມທີ່ສຸດ ລະຫວ່າງທ້າຍເດືອນ ພຶດສະພາ ຫາ ເດືອນ ມິຖຸນາ, ຊ່ອງນີ້ຕົ້ນໄຜ່ທີ່ປູກຈະ ມີໂອກາດລອດຕາຍສູງ ສາມາດປັບຕົວເຂົ້າກັບສະພາບດິນຟ້າອາກາດ ແລະ ແຕກໜໍ່ໃໝ່ທັນກັບລະດູການ. ຊຶ່ງສາມາດຈະເລີນເຕີບໂຕໄດ້ດີໃນປີຖັດໄປ. ການປູກຄວນປະຕິບັດດັ່ງນີ້:

- ສາມາດປູກໄມ້ຂົມຈາກເຫງົ້າຊຳເບົ້າທີ່ກະກຽມໄວ້ໃນເຮືອນຮົ່ມ ແລະ ເມື່ອ ຮອດລະດູການປູກໄປຂຸດເອົາເຫງົ້າທີ່ມີອາຍຸ 1-2 ປີ ມາປູກທັນທີ (ວິທີນີ້ ບໍ່ໃຫ້ເກັບຮັກສາເຫງົ້າໄວ້ເກີນ 2-3 ວັນ) ເພາະເຫງົ້າຈະແຫ້ງຕາຍ. ຂຸດ ເຫງົ້າແລ້ວເອົາໃສ່ໃນເປົ່າ ຫົດນ້ຳໃຫ້ຊຸ່ມ ຂົນສົ່ງໄປປູກເລີຍ.

.indd 9 4/30/2025 9:07:28 AM

- ໄລຍະຫ່າງຂອງການປູກ 2X2 ແມັດ. ໂດຍການຂຸດຂຸມໃຫ້ກວ້າງ ແລະ ເລິກ ກວ່າຂະໜາດຂອງເບ້າເຫງົ້າ. ຂະໜາດຂຸມປູກທີ່ເໝາະສົມແມ່ນ 30X30X30 ຊັງຕີແມັດ (ປາກຂຸມກວ້າງ 30 ຊັງຕີແມັດ, ຂຸມເລິກ 30 ຊັງຕີແມັດ ແລະ ກົ້ນຂຸມກວ້າງ 30 ຊັງຕີແມັດ). ເວລາຂຸດຂຸມປູກໃຫ້ແຍກດິນອອກເປັນ 2 ສ່ວນຄື: ສ່ວນດິນຊັ້ນໜ້າໃຫ້ເອົາໄວ້ຂ້າງໃດໜຶ່ງ ແລະ ສ່ວນດິນຊັ້ນລຸ່ມເອົາໄວ້ຂ້າງໜຶ່ງຕ່າງຫາກ. ເວລາປູກ ຈີກຖົງຢາງດຳອອກແລ້ວ ວາງເບ້າເຫງົ້າໄມ້ຂົ່ມລົງໃນຂຸມ ໃຫ້ຄໍຮາກພຽງກັບລະດັບໜ້າດິນ ແລ້ວເອົາດິນຊັ້ນໜ້າຖົມລົງຂຸມກ່ອນ ສຸດທ້າຍເອົາດິນຊັ້ນລ່າງຖົມລົງຕາມຫຼັງ ໃຫ້ດິນພຽງກັບລະດັບໜ້າດິນເດີມ ຢຽບດິນອ້ອມຄໍຮາກໃຫ້ແໜ້ນ. ເພື່ອປ້ອງກັນບໍ່ໃຫ້ນ້ຳຂັງເຮັດໃຫ້ຮາກຕາຢູ່ເຫງົ້າທີ່ຈະປົ່ງໃໝ່ນັ້ນເນົ່າເປື່ອຍ ແລະ ຕາຍ.

4.4 ການບົວລະບັດຮັກສາ

- ພາຍຫຼັງປູກແລ້ວຄວນປະໃຫ້ເຫງົ້າປູກໃໝ່ຈະເລີນເຕີບໂຕແບບທຳມະຊາດຂອງມັນ. ຕ້ອງໝັ່ນຕິດຕາມກວດກາຢ່າງສະໝ່ຳສະເໝີ ແລະ ຫົດນ້ຳວັນເວັ້ນວັນ (ບາມື້ຫົດນ້ຳ), ສຳລັບມື້ໃດຝົນຕົກແມ່ນບໍ່ໃຫ້ຫົດນ້ຳ.
- ການກຳຈັດວັດສະພືດ ຕ້ອງລະມັດລະວັງໃນເວລາເສຍຫຍ້າພວນດິນ. ເນື່ອງຈາກວ່າຮາກໄມ້ຂົ່ມຫາອາຫານໄຕ້ດິນບໍ່ເລິກ. ຖ້າຮາກໄດ້ຮັບຜົນກະທົບ ມັນອາດຈະເຮັດໃຫ້ເຫງົ້າຕາຍ ຫຼື ເຕີບໂຕຊ້າ. ໄມ້ຂົ່ມເປັນໄມ້ປ່ອງທີ່ເກີດລຳດ່ຽວ. ສະນັ້ນ, ການຂະຫຍາຍຕົວຕົ້ນໃໝ່ລຸ່ນຕໍ່ໄປແມ່ນຂະຫຍາຍຕົວໄປຕາມຮາກ, ຮາກຈະປົ່ງໜໍ່ໃໝ່ໄປເລື້ອຍໆ.
- ການກຳຈັດວັດສະພືດ 2 ຄັ້ງຕໍ່ປີຄື: ກ່ອນລະດູຝົນ (ເດືອນພຶດສະພາ) ແລະ ທ້າຍລະດູຝົນ (ເດືອນພະຈິກ).
- ການໃສ່ຝຸ່ນໂດຍທົ່ວໄປແມ່ນໃສ່ຊ່ວງຕົ້ນລະດູຝົນ. ສຳລັບໝໍ່ຂົ່ມແມ່ນໃສ່ຝຸ່ນກ່ອນລະດູອອກໝໍ່ ເຮັດພາຍຫຼັງກຳຈັດວັດສະພືດແລ້ວ ໃສ່ປຸ໋ຍສູດ 15:15:15 ປະລິມານ 30-40 ກິໂລຕໍ່ໄລ່. ຫວ່ານປຸ໋ຍບໍລິເວນອ້ອມລຳຕົ້ນປະມານ 1 ແມັດ ແລ້ວເອົາເອົາເສດວັດສະພືດປົກ.
- ນຳໃຊ້ແກບປົກຄຸມໜ້າດິນບໍລິເວນເຫງົ້າໃຫ້ທົ່ວພື້ນທີ່ແລ້ວໝັ່ນຫົດນ້ຳໃຫ້ຊຸ່ມ ເພື່ອໜໍ່ທີ່ປົ່ງອອກມາໃໝ່ຈະໄດ້ຄວາມຍາວ ແລະ ອ່ອນ. ທັງເປັນການປົກຄຸມດິນບໍ່ໃຫ້ວັດສະພືດຂະຫຍາຍຕົວ.

ຕາຕະລາງ 01: ກິດຈະກຳ ແລະ ໄລຍະເວລາບົວລະບັດຮັກສາສວນປູກໄມ້ຂົ່ມ

ລ/ດ	ກິດຈະກຳ	ມັງກອນ	ກຸມພາ	ມີນາ	ເມສາ	ພຶດສະພາ	ມິຖຸນາ	ກໍລະກົດ	ສິງຫາ	ກັນຍາ	ຕຸລາ	ພະຈິກ	ທັນວາ
1	ເສຍຫຍ້າພວນດິນ					X						X	

.indd 10 4/30/2025 9:07:28 AM

2	ການຫົດນ້ຳ	X	X	X	X	X							
3	ໃສ່ປ๋ຸຍ						X						X
4	ປ້ອງກັນ	X	X	X	X	X	X	X	X	X	X	X	X
5	ເກັບໝາ	X	X	X	X	X							X

5. ການເກັບກູ້ໝາ່ໄມ້ຂົມ

ພາຍຫຼັງປູກໄດ້ອາຍຸປະມານ 1,8-2 ປີ ໄມ້ຂົມຈະເລີ່ມເກີດໝາ່. ໄມ້ຂົມຈະເກີດໝາ່ຈາກຂໍ້ຮາກທີ່ກະຈາຍຢູ່ພື້ນດິນ, ຊ່ວງລະດູເກີດໝາ່ແມ່ນເລີ່ມຕົ້ນແຕ່ເດືອນທັນວາ ຫາ ເດືອນ ພຶດສະພາ (ຊ່ວງນີ້ແມ່ນລະດູການເກັບໝາ່ໄມ້ຂົມ). ເພື່ອໃຫ້ມີການເກັບກູ້ໝາ່ໄມ້ຂົມແບບຍືນຍົງຄວນປະຕິບັດໃຫ້ຖືກຕ້ອງຕາມການແນະນຳດັ່ງນີ້:

- ນຳໃຊ້ສຽມຂຸດເອົາໝາ່ໄມ້ຂົມທີ່ພົ້ນຈາກໜ້າດິນ 5-25 ຊັງຕີແມັດ.
- ຂຸດເອົາໝາ່ແລ້ວໃຫ້ຖົມດິນຄືນໄວ້ຄືເກົ່າ.
- ຊ່ວງເປີດປ່າເກັບກູ້ໝາ່ໄມ້ຂົມແມ່ນເລີ່ມເດືອນທັນວາ ຫາ ເດືອນ ມີນາ (ເດືອນ 12- ເດືອນ 3).
- ຊ່ວງປິດປ່າ ຫຼື ຢຸດເກັບກູ້ໝາ່ໄມ້ຂົມ ແມ່ນ ເດືອນ ເມສາ ຫາ ເດືອນ ພະຈິກ (ເດືອນ 4- ເດືອນ 11). ເພື່ອໃຫ້ໝາ່ໄມ້ຂົມໄດ້ມີໂອກາດຈະເລີນເຕີບໂຕເປັນລຳໄມ້ຂົມ ແລະ ສາມາດຜະລິດໝາ່ໃນປີຕໍ່ໆໄປ.

.indd 11 4/30/2025 9:07:28 AM

ເອກະສານອ້າງອີງ

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. 2007. ຜະລິດຕະພັນເຄື່ອງປ່າຂອງດົງ 100 ຊະນິດໃນ ສປປ ລາວ.

ສູນທອນເກດພັນ. 1994. ບົດລາຍງານສະພາບໄມ້ປ່ອງໃນ ສປປ ລາວ.

ສີງກອນ ໄຊຍະລາດ. 2020. ຜົນການສຳຫຼວດໄມ້ປ່ອງ ໃນ 8 ແຂວງພາກເຫນືອ ຂອງລາວ ແລະ ຊະນິດໄມ້ປ່ອງໃນ ສປປ ລາວ.

https://www.bambooinfo.in/species/bamboos-of-world.asp

Dransfield S. 1980. Bamboo taxonomy in the Indo-Malesian region. Bamboo Research in Asia: Proceedings of a workshop held in Singapore, 28-30 May 1980. IDRC, Ottawa, ON, CA.

Dransfield S. 1998. Report on fieldwork collecting bamboos in Thailand October-November. Thai For Bull (Bot) 26: 35-39.

Viloune Soydara and Sounthone Ketphanh. 2000. Case Study on the marketing group of bitter bamboo shoots in Nam Pheng Village, Ou-domxai Province.

Yuming, Y.; Kanglin, W.; Shengji, P. and Jiming, H. (2004). Bamboo diversity and traditional uses in Yunnan China, Mountain resources and develop, 24(2): 157-165.

.indd 12 4/30/2025 9:07:28 AM

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ສູນຄົ້ນຄວ້າປ່າໄມ້

ໂຄງການກະສິກຳເພື່ອໂພຊະນາການ ໄລຍະ II

ບ້ານ ໜອງວຽງຄຳ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ສປປລາວ
ໂທ: (+85621) 770094
ແຟັກ: (+85621) 770047
ອີເມວ: bounchanh.mekaloun@gmail.com
ໂທ:(+85620) 23 454 568
ຕູ້ ປ.ນ 7170, ນະຄອນຫຼວງວຽງຈັນ, ສປປລາວ

.indd 13 4/30/2025 9:07:28 AM